# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 14 ຕຸລາ- 2007 ( 10-14-2007

## <u>ເປັນຜູ້ເຊື່ອທີ່ໃສ່ໃຈຕໍ່ສັງຄົມ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ມັດທາຍ 5:13-20

**<u>ຄຳຖາມແຫ່ງຊີວິດ:</u>** ຂ້າພະເຈົ້າຈະສາມາດສົ່ງແສງສວ່າງຂອງພຣະເຢຊູໃຫ້ກັບສັງຄົມຂອງຂ້າພະເຈົ້າໄດ້ແນວໃດ?

**<u>ຄວາມຈິງໃນພຣະຄັມພີ:</u>** ຜູ້ທີ່ເຊື່ອທັງຫລາຍຕ້ອງໃສ່ໃຈຕໍ່ສັງຄົມເພື່ອພຣະເຢຊູຄຣິດດ້ວຍການຈູງໃຈເຂົາເຈົ້າສ່ອງແສງສວ່າງຂອງພຣະຄຣິດດ້ວຍການກະທຳດີ ແລະເສີມສ້າງຄວາມຊອບທັມໃນເວລາດຽວກັນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ຕິດຕາມພຣະເຢຊູ ແລະດຳຣົງຊີວິດຢູ່ໃນຄຳສອນຂອງພຣະອົງໂດຍ:

- ໃຫ້ພຣະເຢຊູຄຣິດສຳແດງທາງຂອງພຣະອົງສະທ້ອນເຖິງສັງຄົມຜ່ານຕົວທ່ານ ແລະ
- ສິ່ງທີ່ພຣະອົງໄດ້ຊົງມອບໝາຍໃຫ້ທ່ານເຮັດ..

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ.

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

**<u>ບົດນຳ</u>:** ຜູ້ຜູ້ທີ່ເຊື່ອບາງຄົນຍັງຢູ່ໃນຄວາມມືດ ເຂົາຍັງທຳເໝືອນສັງຄົມອື່ນ ໆ ຫລາຍກວ່າການຢູ່ຫ່າງໄກຈາກສັງຄົມອັນມືດມົນນັ້ນ. ໃນເມື່ອເຂົາພົບພໍ້ຄົນທີ່ມີຄວາມເຊື່ອທີ່ແຕກຕ່າງກັບຄວາມເຊື່ອຂອງເຂົາ ເຂົາກໍຕັ້ງເປັນສັດຕຣູກັນກັບເຂົາ.

**ດຳເນີນຕໍ່ໄປ:** ຢ່າງໃດກໍຕາມ, ພຣະເຢຊູຊົງຮຽກເອີ້ນພວກເຮົາວ່າ ເປັນຜູ້ທີ່ມີພລັງແສງສະທ້ອນອັນແຮງກ້າທີ່ສະທ້ອນແສງຂອງພຣະຄຣິດເຂົ້າໄປສູ່ສັງຄົມ ແລະພວກເຮົາເປັນຜູ້ທີ່ມີຄວາມຮັກຕໍ່ໂລກ. ພວກເຮົາເປັນແສງສວ່າງທີ່

ສ່ອງເຂົ້າໄປໃນຄວາມມືດຂອງໂລກ.

**1. <u>ຮັກສາຄວາມເຄັມໄວ້:</u>** ( ມັດທາຍ 5:13)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ມັດທາຍ 5:13

- ນໍາພານັກຮຽນໄປສຶກສາເຣື່ອງ "**ເກືອ**" ໃຫ້ໄດ້ຄວາມໝາຍທີ່ແທ້ຈິງ

2) **ຄໍາຖາມ:** (1) ເປັນຫຍັງພຣະເຢຊູເວົ້າເຣື່ອງເກືອ?

( 2) ເກືອນັ້ນໝາຍເຖິງຫຍັງ?

(3) ຄຸນປໂຍດຂອງເກືອຄືແນວໃດ?

(4) ເກືອໃຊ້ກັບຊີ້ນຢ່າງໃດ? ເພື່ອຫຍັງ?

3) **ຕົວຢ່າງ:** - ເກືອສາມາດໃຊ້ເປັນສານກັນບູດຂອງອາຫານ, ເຮັດໃຫ້ອາຫານມີຣົດແຊບອີກດ້ວຍ ເຊັ່ນຕົວຢ່າງ ຊີ້ນແຫ້ງກໍເອືອບດ້ວຍເກືອ. ຜູ້ທີ່ເຊື່ອທັງຫລາຍກໍເຊັ່ນດຽວກັນມີພລັງແຮງເພື່ອຮັກສາສັງຄົມໃຫ້ດີໄດ້, ເປັນການກໍາຈັດ ລ້າງຊ່ວຍຄວາມບາບອອກຈາກຈິດວິນຍານໃຫ້ຂາວສະອາດໄດ້ດ້ວຍ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ມັດທາຍ 5:13

1. ການທີ່ພຣະເຢຊູຍົກເອົາເກືອມາເປັນສ່ວນປະກອບໃນການສອນນັ້ນທ່ານຄິດວ່າແນວໃດ?
2. ໃນເມື່ອພຣະເຢຊູເວົ້າວ່າຜູ້ທີ່ເຊື່ອເປັນເກືອສໍາລັບໂລກນັ້ນພຣະອົງໝາຍເຖິງຫຍັງ?
3. ຜູ້ທີ່ເຊື່ອຄວນປະຕິບັດທາງຊອບທັມຢ່າງໃດຕໍ່ສັງຄົມທຸກມື້ນີ້ຢ່າງໃດ?
4. ຜູ້ທີ່ເຊື່ອຈະຊຶມຊວ່ານເຂົ້າໄປໃນສັງຄົມໄດ້ແນວໃດ?

**2. <u>ສ່ອງແສງສວ່າງ:</u>** ມັດທາຍ 5:14-16

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ມັດທາຍ 5:14-16

2) ທົດລອງ: ປິດໄຟໃນຫ້ອງຮຽນຂອງທ່ານ ແລ້ວສົນມຸດໃສ່ຄວາມມືດຂອງສັງຄົມ. ຕໍ່ໄປໃຫ້ເປີດໄຟສາຍ ແລ້ວ ເວົ້າວ່າ: ພຣະເຢຊູຊົງສອນເຖິງການທໍາງານທີ່ດີຂອງຜູ້ທີ່ເຊື່ອນັ້ນຄວນສະທ້ອນໄປເຖິງສັງຄົມທີ່ກໍາລັງຢູ່ໃນ ຄວາມມືດ.

ຈຸດປະສົງກໍຄືໃຫ້ຄົນອື່ນມີໂອກາດຍົກຍ້ອງພຣະກຽດພຣະບິດາ. ພວກເຮົາຜູ້ເປັນຄຣິສຕຽນຖືກຮຽກເອີ້ນ ມາເພື່ອຊ່ວຍ ໃຫ້ຄົນອື່ນໄດ້ເຫັນພຣະເຈົ້າ. ເປັນການສໍາຄັນທີ່ພວກເຮົາໃຫ້ແສງສສວ່າງສ່ອງອອກໄປເພື່ອພຣະເຈົ້າ. ພວກເຮົາສັຣ ເສີນພຣະອົງ ຊຶ່ງບໍ່ແມ່ນສັຣເສີນພວກເຮົາເອງ, ຊຶ່ງເໝືອນກັນກັບແສງຂອງໄຟສາຍທີ່ສ່ອງຜ່ານແກ້ວຫົວໄຟສາຍ ນັ້ນ, ພຣະຄໍາຂອງພຣະເຈົ້າເປັນແສງສວ່າງ, ອ່ານພຣະທັມມັດທາຍບົດທີ 5:14-16 ແລ້ວຍົກເອົາຜູ້ທີ່ສັຣເສີນພຣະເຈົ້າຂື້ນ ມາເປັນຕົວຢ່າງ.

ຈົ່ງພິຈາຣະນາເບິ່ງງຽບໆ: ວ່າທ່ານຈະສ່ອງແສງໃນລັກສນະທໍານອງໃດ? ໃນເວລາທ່ານຈະສ່ອງອອກໄປ ທ່ານ ຈະສ່ອງໃສ່ຈຸດໃດ? ສ່ອງໄປທາງໃດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ມັດທາຍ 5:14-16

1. ແສງສວ່າງທີ່ພຣະເຢຊູເອົາມາໃຊ້ໃນການສອນນັ້ນປຽບທຽບໃສຄົນສມັຍນີ້ແລ້ວເປັນຢ່າງໃດ?
2. ບັນຫາຂອງຄົນທີ່ຈຸດຕະກຽງແລ້ວເອົາກະບຸງມາກວບໄວ້ແມ່ນຫຍັງ?
3. ບັນຫາພາຍໃນສັງຄົມນັ້ນຕ້ອງການແສງສວ່າງຈາກຄຣິສຕຽນໃນລັກສນະໃດ?

**3. <u>ເສີມສ້າງຄວາມຊອບທັມ:</u>** ມັດທາຍ 5:17-20

1) ຂໍໃຫ້ນັກຮຽນອາສາສມັກອ່ານ   ມັດທາມ 5:17-20
2) ພຣະເຢຊູເວົ້າວ່າ: ພຣະອົງມາເພື່ອເຮັດໃຫ້ (ພຣະບັນຍັດຄົບຖ້ວນ). ພຣະເຢຊູຄຣິດແນະນໍາໃຫ້ຜູ້ເຊື່ອຕິດຕາມພຣະອົງໃຫ້ເຮັດ ( ໃຫ້ເປັນຄົນຊອບທັມຫລາຍກວ່າພວກເຄັ່ງສາສນາ ແລະພວກຟາຣີຊາຍ).ໃຊ້ພື້ນຖານທີ່ສໍາຄັນຂອງບົດຮຽນນີ້ເພື່ອໃຫ້ນັກຮຽນເຂົ້າໃຈພຶດຕິກັມຂອງພວກເຄັ່ງສາສນາ ແລະພວກຟາຣີຊາຍ
3) ພາກສົນທະນາ: ເປັນຫຍັງຈຶ່ງເຊື່ອຟັງກົດບັນບັດແລ້ວບໍ່ພໍ? ມີທາງໃດທີ່ພວກເຮົາຈະສາມາດເສີມສ້າງຄວາມຊອບທັມໄດ້?
4) ພຣະເຢຊູສັ່ງໃຫ້ພວກເຮົາປະຕິບັດສິນທັມໃຫ້ຫລາຍກວ່າດໍາເນີນຊີວິດຢູ່ຢ່າງເປັນທັມ. ພຣະເຢຊູເອີ້ນພວກເຮົາມາໃຫ້ອອກໄປເສີມສ້າງຄວາມຊອບທັມຕາມເຂດທີ່ພວກເຮົາຢູ່ແລະອອກໄປທົ່ວພິພົບໂລກ.
5) **ຄໍາຖາມ:** ເຮັດແນວໃດພວກເຮົາຈຶ່ງຈະສາມາດແບ່ງປະເພດຂອງພຣະບັນຍັດນີ້ໄດ້?
6) ຜູ້ຕິດຕາມພຣະເຢຊູ: ຜູ້ທີ່ຕິດຕາມພຣະເຢຊູຄວນຈະຮູ້ສໍາລັບການຢູ່ເພື່ອພຣະເຈົ້າໃຫ້ມີປະສິດທິພາບ.
7) ຖາມວ່າ: ຄຣິສຕຽນທີ່ທ່ານຮູ້ນັ້ນທ່ານໄດ້ສໍາຣວດເບິ່ງບໍ່ວ່າທ່ານໄດ້ພົບຜູ້ທີ່ເປັນຄຣິສຕຽນແທ້ບໍ່?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ມັດທາຍ 5:17-20
1. ພຣະເຢຊູໄດ້ກະທໍາໃຫ້ພຣະບັນຍັດຄົບຖ້ວນສົມບູນໂດຍທາງໃດ?
2. ເຣື່ອງນີ້ໄດ້ສນັບສນູນທ່ານໃຫ້ຕິດຕາມພຣະອົງໄດ້ຢ່າງໃດ?
3. ເຮັດແນວໃດທ່ານຈຶ່ງຈະສາມາດເປັນຄົນຊອບທັມທີ່ປາສະຈາກການເປັນຜູ້ຍຶດຖືກົດໝາຍລ້າ ໆ.
4. ຈະຍອມຮັບເອົາຄວາມຊອບທັມມາປຽບທຽບກັບກົດບັນຍັດຂອງພວກນັກທັມແລະພວກຟາຣີຊາຍໄດ້ຢ່າງໃດ?
5. ບົດຮຽນນີ້ໄດ້ສອນເຣື່ອງການເສີມສ້າງຄວາມຊອບທັມເອົາໄວ້ຢ່າງໃດ?
6. ແມ່ນຫຍັງທີ່ເປັນການເສີມສ້າງຄວາມສັມພັນຂອງທ່ານກັບພຣະເຢຊູທີ່ຖືກຕ້ອງ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ພຣະເຢຊູເວົ້າວ່າ: ເມື່ອໃດຜູ້ທີ່ຕິດຕາມພຣະອົງຫາກທໍາໜ້າທີ່ເອົາໃຈໃສ່ຕໍ່ສັງຄົມ ເຂົາກໍຄືເກືອສໍາລັບໂລກ.
- ພຣະເຢຊູເວົ້າວ່າ:ເມື່ອຜູ້ທີ່ຕິດຕາມພຣະອົງ ຫາກກະທໍາດີນໍາຄົນມາສັຣເສີນພຣະເຈົ້າ ເຂົາກໍຄືແສງສວ່າງ
- ພຣະເຢຊູເວົ້າວ່າ: ເມື່ອຜູ້ທີ່ຕິດຕາມພຣະອົງ ຫາກນໍາຄົນອື່ນມາຫາພຣະເຢຊູ ເຂົາກໍເປັນແສງສວ່າງຂອງໂລກ
- ພຣະເຢຊູມີພຣະປະສົງໃຫ້ຜູ້ທີ່ຕິດຕາມພຣະອົງເສີມສ້າງຄວາມຊອບທັມໃຫ້ກັບສັງຄົມຂອງເຂົາ.
- ຄວາມຊອບທັມຂອງພຣະເຢຊູຍິ່ງໃຫຍ່ສາມາດນໍາຄົນພາຍນອກໃຫ້ມາປະຕິບັດກົດບັນຍັດຂອງພຣະເຈົ້າໄດ້.

ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ. www.lsbf.org.   by JH